ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 019 /ທຄຕລ..ສພບ..2025
ນະຄອນຫຼວງວຽງຈັນ, ວັນທີ:..04...ມິຖຸນາ..2025..

**ມະຕິ**

**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**

**ຄັ້ງທີ 02 ປະຈຳປີ 2025, ວັນທີ 03 ມິຖຸນາ 2025**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 02 ປະຈຳປີ 2025 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 10:00-12:10 ໂມງ ຂອງວັນທີ 03 ມິຖຸນາ 2025 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈູມຄຳ ປະທານສະພາບໍລິຫານ ຂອງ ທຄຕລ. ມີສະມາຊິກສະພາບໍລິຫານຈຳນວນ 07 ທ່ານ ເຂົ້າຮ່ວມ (ໃນນີ້ ມີກຳມະການສະພາບໍລິຫານຈຳນວນ 01 ທ່ານ ບໍ່ສາມາດເຂົ້າຮ່ວມກອງປະຊຸມຄື: ທ່ານ ສອນໄຊ ສີລາເພັດ), ມີຄະນະອຳ ນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1) ເຫັນດີຮັບຮອງທາງດ້ານຫຼັກການ ກ່ຽວກັບ ການສະເໜີປັບປຸງແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງຂອງ ທຄຕລ ປະຈຳປີ 2025;
2) ຮັບຮອງທາງດ້ານຫຼັກການ ກ່ຽວກັບ ການຄັດເລືອກບັນດາຜູ້ຮັບເໝົາໂຄງການດາຕ້າເຊັນເຕີຂອງ ທຄຕລ ໄລຍະທີ 02;
3) ຮັບຮອງທາງດ້ານຫຼັກການ ກ່ຽວກັບ ວຽກງານການເພີ່ມທຶນຂອງ ທຄຕລ;
4) ຮັບຮອງການປ່ອຍກູ້ໃຫ້ລູກຄ້າບໍລິສັດ 02 ລາຍການ ທີ່ຂຶ້ນກັບສິດອະນຸມັດຂອງສະພາບໍລິຫານ;
5) ຮັບຮອງການແຕ່ງຕັ້ງ ຮອງປະທານສະພາບໍລິຫານ ທຄຕລ ຄືນໃໝ່ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ.

**ປະທານສະພາບໍລິຫານ**

**ສຸລິວັດ ສຸວັນນະຈູມຄຳ**